# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ 8 ສິງຫາ 2010 ( 8-8-2010 )**

---

## ປັກຕາໃສ່ຈຸດປະສົງຂອງພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນນີ້:** 2 ຊາມູເອນ 7:1-7, 11ຂ-16, 18-21

**ຄໍາຖາມຊີວິດ:** ບົດຮຽນນີ້ຈະຊ່ອຍໜູນໃຈທ່ານໃຫ້ຊີວິດຂອງທ່ານປັກຕາໃສ່ຈຸດປະສົງຂອງພຣະເຈົ້າ, ບໍ່ແມ່ນປັກຕາໃສ່ແຕ່ຄວາມສຸກທີ່ເຫັນແກ່ຕົນ.

**ພຣະຄັມພີແຫ່ງຄວາມຈິງ:** ບົດຮຽນນີ້ເວົ້າເຖິງການເລືອກທາງເພື່ອນໃຫ້ຊີວິດຂອງເຮົາໄປຕາມພຣະປະສົງຂອງພຣະເຈົ້າ.

**ຜົນສະທ້ອນຕໍ່ຊີວິດ:** ເວລານີ້ພວກເຮົາຜູ້ອາວຸດໂສພາກັນຊອກຫາທິດທາງແລະຈຸດປະສົງຂອງພຣະເຈົ້າໃນຊີວິດ. ພວກເຮົາພາກັນຫຍຸ້ງກັບພາຣະໜ້າທີ່ກັບວຽກງານ ກັບວຽກ ບ້ານ, ແລະກຸ່ມສັງຄົມ ພວກເຮົາເລີຍບໍ່ຄ່ອຍມີເວລາປັກຕາໃສ່ສິ່ງທີ່ພຣະເຈົ້າ ຕ້ອງການໃຫ້ເຮົາເຮັດ. ພວກເຮົາອາດເປັນຄົນສໍາເຣັດດີໃນສາຍຕາຂອງໂລກ ແຕ່ເຫັນວ່າທາງໃນຊີວິດແລ້ວສັບສົນວຸ້ນວາຍ ເໝືອນຄໍາໂບຮານວ່າ "ກ້ຽງແຕ່ນອກທາງໃນເປັນໝາກເດື່ອ".

ໃຫ້ທ່ານວາດພາບເບິ່ງວ່າຄົນຫລິ້ນ tennis ແຕ່ໃຊ້ໝາກບານເຕະ? ເວລານັກເຕັ້ນສູງເອົາເຄື່ອງລອຍ ນໍ້ານຸ່ງໄປແຂ່ງກໍເຫັນວ່າບໍ່ມີໂອກາດຊະນະໄດ້ເພາະນັກກິລາຊະນິດໃດຈໍາເປັນຕ້ອງໃຊ້ເຄື່ອງກິລາຊະນິດນັ້ນແມ່ນບໍ່? ບານ tennis ໃຊ້ໄດ້ດີເວລາແຂ່ງທີ່ເດີ່ນ tennis ແຕ່ເອົາໄປໃຊ້ເວລາຫລິ້ນ Super Bowl ກໍໃຊ້ການບໍ່ໄດ້ເພາະຜິດຊະນິດກິລາ.

ເຊັ່ນກັນພຣະເຈົ້າໄດ້ສ້າງພວກເຮົາມາຢ່າງມີເປົ້າໝາຍແລະຈຸດປະສົງໃນຊີວິດຂອງພວກເຮົາ. ໝາຍຄວາມວ່າພວກເຮົາຄວນຮຽນຮູ້ຈາກພຣະເຈົ້າວ່າພຣະອົງສ້າງເຮົາມາເພື່ອຈຸດປະສົງອັນໃດ. ເໝືອນກະສັດດາວິດໄດ້ຄົ້ນພົບໃນຊີວິດຂອງເພິ່ນ ພວກເຮົາຄວນເອົາຊີວິດເຂົ້າໄປປະກອບກັບຈຸດປະສົງຂອງພຣະເຈົ້າ. ກະສັດດາວິດຢາກສ້າງພຣະວິຫານໃຫ້ແກ່ອົງພຣະຜູ້ເປັນເຈົ້າ, ແຕ່ເຫັນວ່າພຣະເຈົ້າບໍ່ມີຈຸດປະສົງດັ່ງນັ້ນໃນຊີວິດຂອງເພິ່ນ. ດັ່ງນັ້ນ, ກະສັດດາວິດຈໍາເປັນຕ້ອງປັກຕາ ແລະເອົາໃຈໃສ່ຕໍ່ສິ່ງພຣະເຈົ້າຢາກໃຫ້ເພິ່ນເຮັດ ແລະປະກອບສ່ວນໃນຈຸດປະສົງນັ້ນ.

### 1. ຄວາມຕັ້ງໃຈອັນດີ: (2 ຊາມູເອນ 7:1-7)

ຫລັງຈາກກະສັດດາວິດໄດ້ຍົກຍ້າຍຫີບພຣະສັນຍາໄປຕັ້ງໄວ້ທີ່ກຸງເຢຣູຊາເລັມ ໃນທີ່ສຸດເພິ່ນກໍໄດ້ພົບກັບສັນຕິສຸກແລະຮັ່ງມີ. ເພິ່ນໄດ້**ອາສັຍຢູ່ໃນພຣະຣາຊວັງ** ແລະເພິ່ນໄດ້ສັ່ງເກດວ່າເພິ່ນມີ**ສັນຕິພາບຈາກພວກສັດຕຣູທັງຫລາຍ.** ເພິ່ນໄດ້ມີໂອກາດຄຶດເຖິງສິ່ງທີ່ເພິ່ນກະທໍາມາວ່າອັນໃດເປັນສິ່ງດີ. ມີຄໍາຖາມວ່າເພິ່ນໄດ້ຄຶດເຖິງອົງພຣະຜູ້ເປັນເຈົ້າຫລືບໍ່? ນີ້ເປັນຄໍາຖາມອັນສົມຄວນແລະຖືກຕ້ອງ ແລະເປັນຄໍາຖາມທີ່ພຣະເຈົ້າມີພຣະປະສົງໃຫ້ດາວິດເຮັດຫລືບໍ່? ບາງເທື່ອສິ່ງທີ່ເຮົາເຮັດນັ້ນເປັນສິ່ງດີ ແຕ່ຄໍາຖາມມີຢູ່ວ່ານັ້ນເປັນສິ່ງທີ່ພຣະເຈົ້າຕ້ອງການໃຫ້ເຮັດຫລືບໍ່?.

ກະສັດດາວິດບໍ່ພໍໃຈໃນການຢູ່ໃນພະຣາຊວັງທີ່ເຮັດດ້ວຍໄມ້**ສົນດາຢ່າງດີ** ແຕ່ຫີບພຣະສັນຍາຍັງຕັ້ງຢູ່ໃນ**ຜ້າເຕັ້ນ.** ດາວິດມີຄວາມຕັ້ງໃຈຢາກສ້າງພຣະວິຫານໃຫ້ສົມຄວນທີ່ຈະເອົາຫີບພຣະສັນຍາໄປຕັ້ງໄວ້ຢ່າງຖາວອນ. ໃນພຣະຄັມ

ພິຕອນນີ້ບໍ່ເຫັນວ່າດາວິດໄດ້ໃຊ້ເວລາອະທິຖານເຖິງການສ້າງນັ້ນວ່າຄວນເຮັດຢ່າງໃດ. ເພິ່ນໄດ້ຖາມຜູ້**ປະກາດພຣະທັມ ນາທານ**, ແຕ່ເພິ່ນບໍ່ໄດ້ສແວງຫາການນໍາພາຈາກພຣະເຈົ້າ. ຜູ້ປະກາດພຣະທັມ ນາທານ ໄດ້ແນະນໍາບອກໃຫ້ດາວິດລົງມືສ້າງໂລດເພາະເຫັນວ່າເປັນສິ່ງດີ. ຄວາມຫວັງດີນັ້ນອາດບໍ່ເປັນການພຽງພໍຕໍ່ພຣະທັຍຂອງພຣະເຈົ້າ.

ພຣະຄໍາຂອງພຣະເຈົ້າໄດ້ມາຫາຜູ້ປະກາດພຣະທັມ ນາທານ ແລະບອກໃຫ້ດາວິດຮູ້ວ່າເພິ່ນໄດ້ເຮັດຜິດແລ້ວ. ພຣະເຈົ້າໄດ້ຕັດສັ່ງຊຶ່ງແທງເຂົ້າໃນຈິດໃຈຂອງດາວິດຊຶ່ງເປັນຄໍາຖາມວ່າ, **ທ່ານຈະສ້າງວິຫານໃຫ້ເຮົາສະຖິດຢູ່ນັ້ນຫລື?** ກະສັດດາວິດຄວນສແວງຫາພຣະເຈົ້າກ່ອນຈະລົງມືສ້າງພຣະວິຫານ. ແທນທີ່ຈະມີແຕ່ຝັນຈະສ້າງພຣະວິຫານໃຫ້ໃຫຍ່ໂຕມະໂຫລານ ແຕ່ເປັນການດີກວ່າໃຫ້ພຣະເຈົ້ານໍາພາວ່າຄວນເຮັດຢ່າງໃດ. ດາວິດຄວນມອງເຫັນຄວາມແຕກຕ່າງກັບສິ່ງທີ່ດີ ແລະສິ່ງທີ່ພຣະເຈົ້າຢາກໃຫ້ເຮັດ.

> ໃນເມື່ອພວກເຮົາຝັນຫາເຮັດອັນນັ້ນອັນນີ້ເພື່ອພຣະເຈົ້າ ເປັນການດີກວ່າພວກເຮົາຄວນນໍາເອົາຄວາມຝັນ ແລະຄວາມປາຖນານັ້ນໄປຫາພຣະເຈົ້າດ້ວຍການອ້ອນວອນອະທິຖານ ເພື່ອຢາກຮູ້ວ່ານັ້ນເປັນສິ່ງພຣະເຈົ້າພໍພຣະທັຍຫລືບໍ່ໃນຊີວິດຂອງພວກເຮົາ. ເຖິງແມ່ນວ່າຄວາມປາຖນາຂອງເຮົານັ້ນເປັນສິ່ງດີແຕ່ມັນອາດບໍ່ແມ່ນນໍ້າພຣະທັຍຂອງພຣະເຈົ້າຢາກໃຫ້ເຮົາເຮັດ. ຄວາມຫວັງດີນັ້ນອາດບໍ່ເປັນການດີພໍ. ພວກເຮົາຈໍາເປັນຕ້ອງໃຫ້ພຣະເຈົ້ານໍາພາໃນຊີວິດ.

## 2. <u>**ນໍ້າພຣະທັຍຂອງພຣະເຈົ້າ:**</u> (2 ຊາມູເອນ 7:11ຂ-6)

ກະສັດດາວິດໄດ້ຄົ້ນພົບບັນຫາກັບຄວາມຝັນຢາກເຮັດເພື່ອພຣະເຈົ້າ ຄືເຫັນວ່າຄວາມຝັນນັ້ນມັນນ້ອຍເກີນໄປທີ່ເພິ່ນຕ້ອງການສ້າງພຣະວິຫານໃຫ້ແກ່ພຣະເຈົ້າ, ແຕ່ພຣະເຈົ້າມີພຣະປະສົງຢາກສ້າງຢ້າວເຮືອນ ແລະ**ອານາຈັກ** ຄືເຮັດໃຫ້ເຊື້ອສາຍຂອງເພິ່ນນັ່ງບັນລັງຕລອດໄປ. ກະສັດດາວິດມີຈິດໃຈດີ ແຕ່ພຣະເຈົ້າຍິ່ງມີພຣະປະສົງດີກວ່ານັ້ນອີກ.

ພຣະເຈົ້າສັນຍາວ່າຫລັງຈາກກະສັດດາວິດຕາຍໄປແລ້ວ ພຣະອົງຈະຈັດໃຫ້**ເຊື້ອສາຍ**ເພິ່ນ**ນັ່ງບັນລັງສືບຕໍ່ໄປ.** ພຣະເຈົ້າໄດ້ເປີດໂອກາດໃຫ້ລູກຊາຍຂອງດາວິດຄື ໂຊໂລໂມນເປັນຜູ້ສ້າງພຣະວິຫານໃນກຸງເຢຣູຊາເລັມ ແຕ່ພຣະເຈົ້າໄດ້ຈັດໃຫ້ອົງພຣະເຢຊູຜູ້ເປັນເຊື້ອສາຍຂອງດາວິດນັ່ງບັນລັງຕລອດໄປ.

ພຣະເຈົ້າໄດ້ສົ່ງພຣະບຸດຂອງພຣະອົງເຂົ້າມາໃນໂລກ ແລະພຣະອົງສັນຍາວ່າຈະເປັນບິດາຕໍ່ເສື້ອຍສາຍຂອງດາວິດ. ພຣະເຈົ້າຍັງສັນຍາອີກວ່າຈະໃຊ້ໄມ້ເທົ້າຂອງມະນຸດນໍາພາແລະສັ່ງສອນ. ພຣະເຈົ້າໄດ້ໃຊ້ຄົນຕ່າງຊາດຄື ອັສຊີເຣັຽ ແລະບາບີໂລນລົງໂທດຄົນຂອງພຣະອົງເພາະພວກເຂົາບໍ່ຍອມຫັນໜີຈາກຄວາມຜິດບາບ ແລະຫັນໜ້າຫາພຣະອົງເຈົ້າ. ພຣະເຈົ້າບອກວ່າ**ຄວາມຮັກແລະຄວາມສັດຊື່**ຂອງພຣະອົງນັ້ນຈະບໍ່ໜີຈາກຄົນຂອງພຣະອົງ ເພາະພຣະອົງໄດ້ຊົງສັນຍາໄວ້ກັບດາວິດວ່າຈະໃຫ້ມີຄົນສືບ**ນັ່ງບັນລັງ**.

> **ພຣະສັນຍາກັບກະສັດດາວິດ**
>
> ໃນຂໍ້ນີ້ພຣະເຈົ້າໄດ້ຊົງພຣະສັນຍາກັບກະສັດດາວິດໂດຍບໍ່ມີເງື່ອນໄຂຄື ເພິ່ນຈະມີເຊື້ອສາຍນັ່ງບັນລັງຕລອດໄປ. ບາງຄັ້ງກໍເຫັນວ່າພຣະສັນຍານັ້ນອາດເປັນໄປບໍ່ໄດ້ເພາະອານາຈັກໄດ້ແບ່ງແຍກອອກກັນ, ແຕ່ທີ່ສຸດອົງພຣະເຢຊູ ຜູ້ເປັນເຊື້ອສາຍຂອງກະສັດດາວິດໄດ້ສະເດັດມາຕັ້ງອານາຈັກຕລອດໄປ.

ກະສັດດາວິດມີຄວາມຕັ້ງໃຈດີ ແຕ່ເພິ່ນຕ້ອງກວດເບິ່ງການຕັດສິນໃຈຢ່າງລະມັດລະວັງ ເພິ່ນຕ້ອງເບິ່ງຕາມລັກສະນະຂອງພຣະເຈົ້າ. ດາວິດຕ້ອງການສ້າງພຣະວິຫານໃຫ້ພຣະເຈົ້າ ແຕ່ເຫັນວ່ານັ້ນບໍ່ແມ່ນແຜນການຂອງພຣະເຈົ້າແຕ່ແມ່ນກະສັດໂຊໂລໂມນເປັນຜູ້ທີ່ພຣະເຈົ້າຕັ້ງພຣະທັຍໃຫ້ສ້າງ. ແນວໃດກໍດີພຣະເຈົ້າມີແຜນການໃຫຍ່ກວ່ານັ້ນຄື

ພຣະອົງມີແຜນການສ້າງອານາຈັກເພື່ອດາວິດຕລອດໄປໂດຍສົ່ງອົງພຣະເຢຊູ ພຣະບຸດອົງດຽວເຂົ້າມາໃນໂລກມາເປັນພຣະເມຊີອານ.

ກະສັດດາວິດບໍ່ໄດ້ຫລົງລືມກັບຄວາມໄຝ່ຝັນຂອງຕົນເອງ. ໃນເມື່ອພຣະເຈົ້າໄດ້ເປີດເຜີຍແຜນການຂອງພຣະອົງຕໍ່ດາວິດ ເພິ່ນກໍດັດແປງໃຫ້ເຂົ້າກັບເປົ້າໝາຍຂອງພຣະເຈົ້າ ເພິ່ນບໍ່ໄດ້ຕາມໃຈຂອງຕົນໃນການຮັບໃຊ້ພຣະເຈົ້າ. ພວກເຮົາເຊັ່ນກັນ ຄວນເອົາຕົວຢ່າງຂອງດາວິດມາປະກອບໃຊ້ໃນຊີວິດ ໃຫ້ເຂົ້າໃຈວ່າພຣະເຈົ້າຍ່ອມມີແຜນການດີກວ່າຂອງພວກເຮົາ. ເທົ່າທີ່ທ່ານໄດ້ຊອກສະແຫວງຫານໍ້າພຣະທັຍຂອງພຣະເຈົ້າດ້ວຍການອ້ອນວອນ ແລະໃນເມື່ອພຣະອົງເປີດເຜີຍໃຫ້ຮູ້ແລ້ວ ພວກເຮົາຄວນດັດແປງໃຫ້ຖືກກັບຈຸດປະສົງຂອງພຣະເຈົ້າ.

### 3. <u>**ການຖ່ອມຕົວ ແລະຍອມຕໍ່:**</u> (2 ຊາມູເອນ 7:18-12)

ເຫັນວ່າເວລາທົ່ວທີ່ກະສັດດາວິດບໍ່ໄດ້ຊອກຫາທາງຂອງພຣະເຈົ້າ, ແຕ່ຕອນນີ້ເພິ່ນໄດ້**ນັ່ງລົງຕໍ່ພຣະພັກຂອງພຣະເຈົ້າ**. ເພິ່ນໄດ້ເຂົ້າໄປໃນຜ້າເຕັ້ນທີ່ເພິ່ນເຄີຍຕ້ອງຕົນມາກ່ອນ ແລະເວລານີ້ເພິ່ນໄດ້ເຂົ້າໄປຢູ່ຕໍ່ພຣະພັກຂອງພຣະເຈົ້າເພື່ອຢາກຮູ້ວ່າພຣະເຈົ້າຢາກໃຫ້ເພິ່ນເຮັດຫຍັງ.

ດາວິດບໍ່ໄດ້ຕໍ່ວ່າພຣະເຈົ້າເຖິງການສ້າງພຣະວິຫານເຖິງແມ່ນເພິ່ນມີຄວາມປາຖນາຢາກເປັນຜູ້ສ້າງ, ແຕ່ເພິ່ນໄດ້ຍອມຖ່ອມຕົວຖ່ອມໃຈໂດຍກ່າວວ່າ **ຂ້າພະອົງເປັນໃຜ ພຣະເຈົ້າເອີຍ, ພຣະອົງໄດ້ນຳພາໃຫ້ຄອບຄົວຂອງຂ້າພຣະອົງມາເຖິງປານນີ້?** ກະສັດດາວິດໄດ້ມີຊີວິດດີຫລາຍເພາະເຄີຍເປັນຜູ້ລ້ຽງສັດຈົນກາຍມາເປັນເຈົ້າຊີວິດ. ເພິ່ນໄດ້ນັ່ງບັນລັງກໍເພາະຍ້ອນພຣະເຈົ້າເປັນຜູ້ຍົກເພິ່ນຂຶ້ນ.

ດາວິດໄດ້ເລີ່ມສົນທະຫາກັບພຣະເຈົ້າເຖິງການສ້າງພຣະວິຫານວ່າເພິ່ນຈະເຮັດຢ່າງໃດ ແຕ່ໃນທີ່ສຸດເພິ່ນໄດ້ມິດສງັດໃນເມື່ອຮູ້ວ່າພຣະເຈົ້າຈະເຮັດສິ່ງໃຫຍ່ກວ່າຕົນໄດ້ຄຶດໄວ້ **ດາວິດຄວນກ່າວຕໍ່ພຣະເຈົ້າອີກຢ່າງໃດ?** ພຣະເຈົ້າໄດ້ເຮັດໃຫ້ດາວິດປາກບໍ່ອອກເພາະພຣະອົງໄດ້ສັນຍາວ່າຈະສ້າງອານາຈັກໃຫ້ດ້ວຍບໍ່ສິ້ນສຸດຈັກເທື່ອຫລືສູນໄປ.

ຊີວິດຂອງຄຣິສະຕຽນແມ່ນການເວົ້າເຖິງສິ່ງພຣະເຈົ້າໄດ້ເຮັດເພື່ອພວກເຮົາຫລາຍກວ່າສິ່ງເຮົາໄດ້ເຮັດເພື່ອພຣະອົງ. ໃນເມື່ອພວກເຮົາໄດ້ຮູ້ສຶກຕົວໃນສິ່ງທີ່ພຣະອົງໄດ້ເຮັດເພື່ອພວກເຮົາແລ້ວ ແນ່ນອນພວກເຮົາກໍຈະເອົາໃຈໃສ່ໃນການຮັບໃຊ້ພຣະອົງໃຫ້ຫລາຍຂຶ້ນ. ແຕ່ແນວໃດກໍຕາມມັນອາດບໍ່ແມ່ນເຮົາເຮັດຕາມໃຈຫລືຄວາມຝັນເທົ່ານັ້ນ. ການຖ່ອມຕົວລົງນັ້ນໄດ້ເຕືອນພວກເຮົາໃຫ້ຮູ້ວ່າ ເຮົາເຮັດຫຍັງບໍ່ໄດ້ຖ້າປາສຈາກອົງພຣະຄຣິດ (ໂຢຮັນ 15:5). ຄວາມຝັນໃຫຍ່ນັ້ນບໍ່ສາມາດແລກປ່ຽນກັບມີຄວາມສຳພັນອັດດີກັບອົງພຣະຄຣິດເລີຍ.

ໃນເມື່ອພວກເຮົາຊອກສແວງຫາພຣະເຈົ້າດ້ວຍການອ້ອນວອນ ແລະໃນເມື່ອພຣະອົງເປີດທາງໃຫ້ຮູ້ແລ້ວ
. ພວກເຮົາຕ້ອງດັດແປງຊີວິດຂອງເຮົາໃຫ້ຖືກກັບຈຸດປະສົງຂອງພຣະອົງ

ພຣະເຈົ້າໄດ້ສະແດງໃຫ້ດາວິດຮູ້ແຜນການຂອງພຣະອົງສອງຢ່າງ. ນຶ່ງ, ພຣະອົງບອກໃຫ້ຮູ້ດ້ວຍທາງ**ພຣະຄຳ.** ພຣະເຈົ້າສັນຍາວ່າເຊື້ອສາຍຂອງເພິ່ນຈະເປັນຄົນສ້າງພຣະວິຫານອັນທຳອິດ, ແລະອີກຄົນນຶ່ງຈະເປັນຜູ້ມີຊື່ເສັຽດີ. ໂຊໂລໂມນເປັນຄົນສ້າງພຣະວິຫານນັ້ນ, ແລະອົງພຣະຄຣິດຜູ້ເຊື້ອສາຍຂອງດາວິດເປັນຜູ້ຈັດຕັ້ງອານາຈັກຕລອດໄປ. ໃນເມື່ອດາວິດໄດ້ຮູ້ເຖິງແຜນການອັນໃຫຍ່ຂອງພຣະເຈົ້າແລ້ວ ເພິ່ນກໍໄດ້ດັດແປງຊີວິດຂອງເພິ່ນໃຫ້ຖືກຕ້ອງຕາມພຣະປະສົງຂອງພຣະເຈົ້າ. ໃນເມື່ອພວກເຮົາຕ້ອງການຢາກຮູ້ແຜນການຂອງພຣະເຈົ້ານັ້ນ ພວກເຮົາຕ້ອງອາສັຍພຣະຄຳຂອງພຣະເຈົ້າໃນຊີວິດ. ຢ່າເຂົ້າໃຈວ່າມີຄວາມຄຶດດີນັ້ນເປັນສິ່ງທີ່ພຣະເຈົ້າຊອບພຣະທັຍ.

ສອງ, ພຣະເຈົ້າໄດ້ເປີດເຜີຍແຜນການຂອງພຣະອົງໃຫ້ດາວິດນັ້ນກໍເປັນພຣະປະສົງຂອງພຣະເຈົ້າ. ພຣະເຈົ້າບໍ່ອະນຸຍາດໃຫ້ດາວິດສ້າງພຣະວິຫານ ແຕ່ພຣະອົງມີແຜນການຈະສ້າງອານາຈັກຖາວອນແກ່ດາວິດຊຶ່ງ ເປັນການດີກວ່າແມ່ນບໍ່? ພຣະເຈົ້າມີສິ່ງທີ່ກວ່າສຳລັບພຣະວິຫານ ແລະໃນຊີວິດຂອງດາວິດເອງ.

## ບົດຮຽນໃນຊີວິດ

ພຣະເຈົ້າໄດ້ສ້າງພວກເຮົາແຕກຕ່າງກັນ. ພວກເຮົາມີບຸກຄະລິລັກສະນະແຕກຕ່າງກັນ. ພວກເຮົາມີພຣະພອນບໍ່ຄືກັນ. ແຕ່ພຣະເຈົ້າໄດ້ໃຊ້ພວກເຮົາທຸກໆຄົນເພື່ອໃຫ້ແຜນການຂອງພຣະອົງສຳເຣັດລົງ. ບາງຄົນມີພຣະພອນໃນທາງການສິດສອນ, ບາງຄົນມີພຣະພອນໃນການຄິດໄລ່ເພື່ອຈະຮ່ວມງານກັບນາຍບັນຊີ. ພຣະເຈົ້າໄດ້ສ້າງພວກເຮົາໃຫ້ແຕກຕ່າງເພື່ອຈະໃຊ້ປະກອບສ່ວນກັບແຜນການຂອງພຣະອົງ. ແທນທີ່ພວກເຮົາຈະຝັນຢາກເຮັດອັນນັ້ນອັນນີ້ເພື່ອພຣະເຈົ້າ ເປັນຫຍັງພວກເຮົາຈຶ່ງບໍ່ພາກັນຊອກຫານ້ຳພຣະທັຍຂອງພຣະອົງວ່າພຣະອົງຕ້ອງການໃຫ້ເຮົາເຮັດຫຍັງ. ການທີ່ພຣະເຈົ້າໄດ້ເອີ້ນເອົາເຮົານັ້ນ ອາດເປັນການແຕກຕ່າງກັບການເອີ້ນຂອງເພື່ອນຄົນອື່ນ ແຕ່ພຣະເຈົ້າຕ້ອງການໃຫ້ທຸກຄົນມີຄວາມເຊື່ອຟັງພຣະອົງ. ບົດຮຽນນີ້ພວກເຮົາໄດ້ຮຽນຫຍັງແດ່?

- ການມີຄວາມຕັ້ງໃຈດີນັ້ນບໍ່ອາດເຮັດໃຫ້ພຣະເຈົ້າພໍພຣະທັຍ.
- ສຳລັບພວກເຮົາແລ້ວສ່ວນຫລາຍເຫັນວ່າການມີຄວາມຕັ້ງໃຈດີນັ້ນເປັນສິ່ງສຳຄັນກວ່າສິ່ງເຮົາຢາກເຮັດເພື່ອພຣະເຈົ້າ.
- ໃນເມື່ອພວກເຮົາໄດ້ຮູ້ເຖິງພຣະທັຍຂອງພຣະເຈົ້າແລ້ວ, ພວກເຮົາຄວນຖ່ອມຕົວລົງ ແລະຍອມຕໍ່ພຣະປະສົງຂອງພຣະອົງໃນຊີວິດ.
- ພວກເຮົາຄວນສຶກສາພຣະຄັມພີ ແລະອ້ອນວອນອະທິຖານເພື່ອຢາກຮູ້ນ້ຳພຣະທັຍຂອງພຣະເຈົ້າ.

ຄຣິສະຕຽນຫລາຍຄົນມີຄວາມຮູ້ສຶກບໍ່ພໍໃຈເພາະຕົນເອງເຕະບານໃນເດີ່ນ tennis. ພວກເຂົາຮູ້ສຶກຢູ່ຜິດບ່ອນ ແລະໝົດກຳລັງໃຈໃນເມື່ອທຽບກັບຄົນອື່ນຜູ້ຮັບໃຊ້ດ້ວຍກັນ. ຈົ່ງເຮັດເໝືອນກະສັດດາວິດ ພວກເຮົາຄວນຍິນດີໃນເມື່ອຮູ້ວ່າພຣະເຈົ້າຕ້ອງການໃຫ້ເຮັດຫຍັງ ກະສັດດາວິດມີຄວາມຍິນດີທັງໆທີ່ບໍ່ໄດ້ເປັນຜູ້ສ້າງພຣະວິຫານ ເຖິງແມ່ນວ່ານັ້ນເປັນຄວາມຝັນຂອງເພິ່ນກໍຕາມ ເພາະພຣະເຈົ້າມີແຜນແນວອື່ນ. ກະສັດດາວິດມີປັນຍາເພື່ອມອງເຫັນນ້ຳພຣະທັຍຂອງພຣະເຈົ້າ.

ອຸປຖັມໂດຍ ລາວຊາວເຫີນບັບຕິສສັມພັນ www.lsbf.org.,by BV.